ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມໃຫຍ່ຜູ້ແທນສະຫະພັນກຳມະບານ ທຫລ ຄັ້ງທີ VIII ສຳເລັດຜົນຢ່າງຈົບງາມ



ກອງປະຊຸມໃຫຍ່ຜູ້ແທນສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ (ທຫລ) ຄັ້ງທີ VIII ສຳເລັດລົງຢ່າງຈົບງາມໃນວັນທີ 27 ມິຖຸນາ 2020 ທີ່ ສະໂມສອນສະຖາບັນການທະນາຄານ, ໂດຍພາຍໃຕ້ການເປັນປະທານຂອງສະຫາຍນາງ ຂັນແກ້ວ ຫຼ້າມະນີເງິາ ຄະນະພັກ, ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ, ປະທານສະຫະພັນກຳມະບານ ທຫລ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການ ທຫລ; ສະຫາຍ ວັນນາ ດວງພະຈັນ ຮອງປະທານສູນກາງສະຫະພັນກຳມະບານລາວ; ພ້ອມນີ້, ກໍ່ມີຜູ້ຕາງໜ້າຄະນະກຳມະບານຈາກຂະແໜງການກ່ຽວຂ້ອງ, ຄະນະອຳນວຍການທະນາຄານທຸລະກິດ, ຜູ້ຕາງໜ້າຈາກອົງການຈັດຕັ້ງຊາວໜຸ່ມ-ແມ່ຍິງ ທຫລ ແລະ ຜູ້ແທນກຳມະບານຈາກຮາກຖານທີ່ຂຶ້ນກັບ ເຂົ້າຮ່ວມ.

ກອງປະຊຸມ ໄດ້ພ້ອມກັນຄົ້ນຄ້ວາປະກອບຄວາມເຫັນ ແລະ ເປັນເອກະພາບ ຮັບຮອງເອົາບົດລາຍງານການເມືອງທີ່ສະເໜີໂດຍສະຫາຍນາງ ຂັນແກ້ວ ຫຼ້າມະນີເງິາ ປະທານສະຫະພັນກຳມະບານ ທຫລ ຊຶ່ງໄດ້ສະຫຼຸບຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ທີ່ຜ່ານມາ ໂດຍໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ຖັນແຖວສະມາຊິກກຳມະບານ ດ້ວຍການເຊື່ອມຊຶມແນວທາງແຜນນະໂຍບາຍ, ມະຕິກອງປະຊຸມໃຫຍ່ຂອງຂັ້ນເທິງ, ລະບຽບກົດໝາຍ ແລະ ວັນປະຫວັດສາດສຳຄັນຕ່າງໆ.ຜ່ານການສຶກສາອົບຮົມເຮັດໃຫ້ຖັນແຖວພະນັກງານ-ສະມາຊິກກຳມະບານ ມີຄວາມຕື່ນຕົວທາງດ້ານການເມືອງ, ເຊື່ອໝັ້ນ ແລະ ເປັນເອກະພາບສູງຕໍ່ແນວທາງນະໂຍບາຍຂອງພັກ, ພ້ອມກັນເຊີດຊູສະຕິເປັນເຈົ້າຕົນເອງ, ເສີມຂະຫຍາຍລັກສະນະດີເລີດຂອງຊົນຊັ້ນກຳມະກອນໂດຍສະເພາະນ້ຳໃຈເສຍສະຫຼະເພື່ອສ່ວນລວມ, ມີລະບຽບວິໄນເຂັ້ມງວດ ແລະ ບຸກບືນເອົາໃຈໃສ່ພັດທະນາຄວາມຮູ້ຄວາມສາມາດຂອງຕົນເປັນກຳລັງແຮງສັງລວມຈັດຕັ້ງຜັນຂະຫຍາຍບັນດາມະຕິຄຳສັ່ງຂອງຂັ້ນເທິງເຂົ້າໃນວຽກງານຕົວຈິງ.




ປະຈຸບັນທົ່ວສະຫະພັນກຳມະບານ ທຫລ ມີສະມາຊິກກຳມະບານທັງໝົດ 4.125 ສະຫາຍ ໃນນີ້ມີນັກສຶກສາ 1.058 ສະຫາຍ; ສະມາຊິກໃນຂົງເຂດຮາກຖານທະນາຄານລັດມີ 3.900 ສະຫາຍ ກວມ 94,64% ຂອງພະນັກງານທັງໝົດ. ໄປຄຽງຄູ່ກັບການປັບປຸງການຈັດຕັ້ງໃຫ້ເຂັ້ມແຂງທາງດ້ານຄຸນນະພາບແລ້ວຍັງໄດ້ເອົາໃຈໃສ່ວຽກງານຂະຫຍາຍການຈັດຕັ້ງຮາກຖານໄປສູ່ຂົງເຂດທະນາຄານທຸລະກິດເອກະຊົນ, ເຄື່ອນໄຫວເຜີຍແຜ່ແນວທາງນະໂຍບາຍຂອງພັກ ແລະ ລະບຽບການຕ່າງໆ, ຊຸກຍູ້ການສ້າງຕັ້ງຫົວໜ່ວຍກຳມະບານຢູ່ທະນາຄານເອກະຊົນ, ທະນາຄານຮ່ວມທຶນກັບຕ່າງປະເທດ ເຮັດໃຫ້ຄະນະນຳຂອງທະນາຄານດັ່ງກ່າວເຫັນໄດ້ຄວາມສຳຄັນຂອງການຈັດຕັ້ງກຳມະບານ ແລະ ພິຈາລະນາຄວາມເປັນໄປໄດ້ໃນການຈັດຕັ້ງໜ່ວຍ ຫຼື ຮາກຖານກຳມະບານຂຶ້ນໃນທະນາຄານຂອງຕົນໃນອະນາຄົດ.

ພາຍໃຕ້ການຊີ້ນຳ-ນຳພາຢ່າງໃກ້ຊິດຂອງຄະນະພັກ ທຫລ, ສະຫະພັນກຳມະບານ ທຫລ ໄດ້ເອົາໃຈໃສ່ຊີ້ນຳບັນດາກຳມະບານຮາກຖານໃຫ້ເຄື່ອນໄຫວຕາມພາລະບົດບາດຂອງຕົນ, ລົງເລິກຊີ້ນຳ-ນຳພາສະມາຊິກກຳມະບານປະກອບສ່ວນເຂົ້າໃນການປະຕິບັດວຽກງານວິຊາສະເພາະຢ່າງຫ້າວຫັນໂດຍການຮັກສາສະຖຽນລະພາບເງິນຕາ ແລະ ອັດຕາແລກປ່ຽນໃຫ້ມີຄວາມສະຫງົບປົກກະຕິ, ສ້າງ ແລະ ປັບປຸງບັນດານິຕິກຳທີ່ຕິດພັນກັບຂົງເຂດທະນາຄານ ແລະ ສະຖາບັນການເງິນ, ຄຸ້ມຄອງທະນາຄານທຸລະກິດຕາມຫຼັກການບາເຊວ, ຍົກລະດັບການບໍລິການ, ການຊຳລະສະສາງຂອງທະນາຄານໃຫ້ທັນສະໄໝ, ສະດວກ, ປອດໄພ, ສະໜອງສິນເຊື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນໃນການຜະລິດເປັນສິນຄ້າ, ສິນເຊື່ອທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ (SMEs), ການລົງທຶນກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນແລະອື່ນໆ. ນອກຈາກນັ້ນສະມາຊິກກຳມະບານຍັງປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງສະຖາບັນການເງິນ, ຜັດທະນາຕະຫຼາດທຶນ, ຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ວຽກງານອື່ນໆຕາມທິດທາງແຜນການຂອງຄະນະພັກ ທຫລ ກຳນົດອອກໃນແຕ່ລະໄລຍະ.

ຜ່ານການປະຕິບັດຄືດັ່ງກ່າວເຮັດໃຫ້ກົງຈັກການຈັດຕັ້ງກຳມະບານ ທຫລ ຂະຫຍາຍຕົວກວ້າງຂວາງ ແລະ ໜັກແໜ້ນເຂັ້ມແຂງທາງດ້ານແບບແຜນວິທີເຮັດວຽກແລະວິທີນຳພາ, ມີແບບແຜນການຕິດຕາມກວດກາຢ່າງເປັນລະບົບ ສາມາດປະກອບສ່ວນເຂົ້າໃນການເຮັດສຳເລັດວຽກງານວິຊາສະເພາະດ້ວຍດີສະເໝີມາ. ກອງປະຊຸມຍັງສະເໜີຂໍ້ຄົງຄ້າງ, ວິທີການແກ້ໄຂໃນຜ່ານມາ ແລະ ທິດທາງແຜນການໃນ 5 ປີຕໍ່ໜ້າ.





ກອງປະຊຸມໃຫຍ່ ຍັງພ້ອມກັນໃຊ້ສິດປະຊາທິປະໄຕ ເລືອກເອົາຄະນະສະຫະພັນກຳມະບານ ທຫລ ຊຸດໃໝ່ ປະກອບດ້ວຍ 17 ສະຫາຍ ເພື່ອເປັນແກນນຳໃນການຊີ້ນຳ-ນຳພາໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ປະກົດຜົນເປັນຈິງ ແລະ ນຳພາວຽກງານກຳມະບານຂະແໜງການທະນາຄານ ກ້າວເຂົ້າສູ່ຄວາມສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ; ກອງປະຊຸມໄດ້ເປັນເອກະສັນເລືອກເອົາສະຫາຍນາງ ຂັນແກ້ວ ຫຼ້າມະນີເງົາ ເປັນປະທານສະຫະພັນກຳມະບານ ທຫລ; ເລືອກເອົາຮອງປະທານ 3 ຄົນ ປະກອບດ້ວຍສະຫາຍເສີມທະວີ ສີຫາຝົນ ເປັນຜູ້ປະຈຳການ, ສະຫາຍ ສຸກັນ ຈັນທະວົງ ປະທານກວດກາ ແລະ ສະຫາຍ ວຽງສຸກ ຈຸນທະວົງ.

ກອງປະຊຸມໃຫຍ່ ໄດ້ຮັບຟັງການໂອ້ລົມຈາກສະຫາຍເລຂາຄະນະພັກ ທຫລ ແລະ ສະຫາຍຮອງປະທານສູນກາງສະຫະພັນກຳມະບານລາວ ທີ່ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການຊີ້ນຳ-ນຳພາຂອງຄະນະສະຫະພັນກຳມະບານ ທຫລ ຊຸດເກົ່າໃນການນຳພາສະມາຊິກກຳມະບານໃນທົ່ວຂະແໜງການທະນາຄານປະຕິບັດໜ້າທີ່ການເມືອງ ສາມາດຍາດໄດ້ຜົນງານໃນຫຼາຍໆດ້ານ. ພ້ອມນັ້ນ, ຍັງໃຫ້ທິດຊີ້ນຳອັນມີຄຸນຄ່າໃຫ້ແກ່ການເຄື່ອນໄຫວຊີ້ນຳ-ນຳພາຂອງຄະນະກຳມະບານຊຸດໃໝ່ ສືບຕໍ່ເສີມຂະຫຍາຍຜົນງານອັນພົ້ນເດັ່ນໃນໄລຍະຜ່ານມາ, ສືບຕໍ່ແກ້ໄຂຂໍ້ຄົງຄ້າງໃນຊຸມປີຕໍ່ໜ້າໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງ ແລະ ຮຽກຮ້ອງມາຍັງຄະນະກຳມະບານຂັ້ນຕ່າງໆພ້ອມດ້ວຍສະມາຊິກກຳມະບານຈົ່ງພ້ອມກັນຄົ້ນຄວ້າເຊື່ອມຊຶມເນື້ອໃນຈິດໃຈຂອງມະຕິກອງປະຊຸມຄັ້ງນີ້ ໄປຈັດຕັ້ງຜັນຂະຫຍາຍເປັນແຜນງານ-ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງໃນຂັ້ນຕໍ່ໄປ.

**#ຂ່າວ-ພາບ: ຮັດສະໝີ ດວງສັດຈະ**



# ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ